ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກອງທຶນປົກປັກຮັກສາສິ່ງແວດລ້ອມ

ຫ້ອງການ

ເລກທີ 1512 /ກປສ.ຫກ

ນະຄອນຫຼວງວຽງຈັນ, ວັນທີ 29 ມິຖຸນາ 2024

ແຈ້ງການ

ຮຽນ: ທ່ານ ຫົວໜ້າກົມແຜນການ ແລະ ການເງິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ເລື່ອງ: ແຈ້ງການ ກ່ຽວກັບການສະເໜີຂໍທຶນນຳຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 002/ ກປສ.ສພ, ລົງວັນທີ 09 ກຸມພາ 2021;
- ອີງຕາມ ຂໍ້ຕົກລົງ ຂອງປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ວ່າດ້ວຍ ການຮັບຮອງເອົາບົດສະຫຼຸບການຈັດຕັ້ງປະຕິບັດວຽກງານ 5 ປີ (2016-2020) ແລະ ທິດທາງຟັ້ນການ 5 ປີ (2021-2025) ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 07/ກປສ.ສພ, ລົງວັນທີ 09 ມິຖຸນາ 2021;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຮັບຮອງ ຄຳແນະນຳ ວ່າດ້ວຍນະໂຍບາຍການສະໜອງທຶນພາຍໃນຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 13/ກປສ.ສພ, ລົງວັນທີ 06 ກໍລະກົດ 2022;

ຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ (ຫກປສ) ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ຫກປສ ຈະໄດ້ປິດຮັບເອກະສານບົດສະເໜີໂຄງການສຳລັບປີ 2024 ນັບແຕ່ວັນທີ 30 ກັນຍາ 2024 ເປັນຕົ້ນ ໄປ ເນື່ອງຈາກວ່າ ໄດ້ສະໜອງງົບປະມານ ໃຫ້ພາກສ່ວນຕ່າງໆ ຕາມແຜນຈັດສັນງົບປະມານປະຈຳປີ 2024 ທີ່ ສະພາບໍລິຫານອະນຸມັດແລ້ວ ແລະ ຈະເປີດຮັບບົດສະເໜີໂຄງການໃໝ່ ໃນເດືອນ ມັງກອນ 2025.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການ

ນ. ບົວຄຳ ສຸລິວັນ

ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ, ເຂດນາໄຮ່ດຽວ

ຕຶກ 100, ຊັ້ນ 2, ຕູ້ປນ: 7647, ໂທລະສັບ: 252739, ແຟັກ: 251946